**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ເລກທີ 169/ຫກ

ນະຄອນຫຼວງວຽງຈັນ, ວັນທີ 15 ສິງຫາ 2023

# ແຈ້ງເຊີນເຂົ້າຮ່ວມການປະມູນ

ຫ້ອງການ ທະນາຄານແຫ່ງ ສປປ ລາວ ຂໍຖືເປັນກຽດແຈ້ງມາຍັງບັນດາວິສາຫະກິດທີ່ມີຄວາມສົນໃຈໃນການສະໜອງວັດຖຸ-ອຸປະກອນ ຮັບໃຊ້ໃນຫ້ອງທົດລອງເຂົ້າມາຮ່ວມປະມູນວັດຖຸ-ອຸປະກອນ (ດັ່ງກ່າວລາຍລະອຽດໄດ້ຄັດຕິດມາພ້ອມນີ້. ເງື່ອນໄຂຂອງຜູ້ທີ່ຈະເຂົ້າຮ່ວມການສະເໜີປະມູນມີລາຍລະອຽດດັ່ງລຸ່ມນີ້:

1. ມີໃບທະບຽນວິສາຫະກິດທີ່ຂະແໜງການກ່ຽວຂ້ອງອອກອະນຸຍາດນຳໃຊ້ໄດ້ໃນປັດຈຸບັນ;
2. ມີໃບອະນຸຍາດດຳເນີນທຸລະກິດທີ່ຂະແໜງການກ່ຽວຂ້ອງອອກອະນຸຍາດນຳໃຊ້ໄດ້ໃນປັດຈຸບັນ;
3. ມີໃບຢັ້ງຢືນການມອບພັນທະອາກອນທີ່ຂະແໜງສ່ວຍສາອາກອນບ່ອນທີ່ຕົນຂຶ້ນກັບອອກອະນຸຍາດນຳໃຊ້ໄດ້ໃນປັດຈຸບັນ;
4. ມີໃບທະບຽນການຄ້າ ສຳລັບໃບອານຸຍາດດັ່ງກ່າວຕ້ອງແມ່ນສະບັບລ່າສຸດ ແລະ ໃຫ້ຖືກຕ້ອງສອດຄ່ອງກັບລະບຽບກົດໝາຍ.
5. ມີເອກະສານຢັ້ງຢືນການປະຕິບັດພັນທະຕ່າງໆຕໍ່ລັດທະບານຢ່າງເປັນປົກກະຕິ ຫຼື ຮອດເດືອນລ້າສຸດ;
6. ມີໃບຢັ້ງຢືນຖານະການເງິນຈາກທະນາຄານ ກຳນົດໄລຍະ 03 ເດືອນ;
7. ມີປະສົບການໃນການສະໜອງວັດຖຸ-ອຸປະກອນດັ່ງກ່າວຢ່າງໜ້ອຍ 3 ປີ ຂຶ້ນໄປ;
8. ຕ້ອງໄດ້ຊື້ຊອງປະມູນ 2.000.000 ກີບ (ສອງລ້ານກີບ) ຕໍ່ຊອງ. ຫ້ອງການ ທຫລ ຈະບໍ່ສົ່ງຄືນວົງເງິນດັ່ງກ່າວບໍ່ວ່າກໍລະນີໃດໆ;
9. ຕ້ອງປະກອບເອກະສານການປະມູນຕາມແບບຟອມສະເໜີລາຄາໃຫ້ສອດຄ່ອງກັບລະບຽບການຈັດຊື້-ຈັດຈ້າງ (ມູນຄ່າສະເໜີຕ້ອງລວມມີພາສີ, ອາກອນ ແລະ ຄ່າທຳນຽມຕ່າງໆ);
10. ໃບສະເໜີລາຄາທີ່ປະກອບມາຕ້ອງໄດ້ຕີພິມ, ບໍ່ໃຫ້ມີບ່ອນເປື້ອນ, ບໍ່ມີຮອຍຂີດຂ້າ, ຮອຍລົບ ຫຼື ແປງຕົວເລກແຕ່ຢ່າງໃດ, ເຊັນຢັ້ງຢືນ ແລະ ຈ້ຳກາບໍລິສັດທີ່ກ່ຽວຂ້ອງ;
11. ໃຫ້ພົວພັນຮັບເອົາເອກະສານລະບຽບການປະມູນກັບພະແນກບໍລິຫານ ຫ້ອງການທະນາຄານແຫ່ງ ສປປ ລາວ ໄດ້ທີ່ ບ. ຊຽງຢືນ, ມ. ຈັນທະບູລີ, ນະຄອນຫຼວງວຽງຈັນ ເບີໂທ: 021 241 268.

**ໝາຍເຫດ:**

1. ຖ້າບໍລິສັດ ແລະ ວິສາຫະກິດໃດ ຫາກປະກອບເອກະສານບໍ່ຖືກຕ້ອງຄົບຖ້ວນຕາມຂໍ້ແນະນຳຂ້າງເທິງນີ້ແມ່ນຈະບໍ່ຖືກພິຈາລະນາ ແລະ ຈະບໍ່ອ່ານລາຄາຊອງໜ້າຄະນະກຳມະການ (ຖືວ່າໝົດສິດໃນການປະມູນ).
2. ບັນດາບໍລິສັດ ແລະ ວິສາຫະກິດທີ່ເຂົ້າຮ່ວມປະມູນຕ້ອງຖືຊອງປະມູນ (ທີ່ມີເອກະສານປະມູນຄົບຊຸດ ແລະ ຈ້ຳກາບໍລິສັດໃສ່ໜ້າຊອງ) ມາເອງໃນມື້ເປີດຊອງຕົວຈິງຕໍ່ໜ້າຄະນະກຳມະການ, ສ່ວນວັນເວລາ ແລະ ມື້ເປີດຊອງປະມູນຈະແຈ້ງໃຫ້ຊາບຕາມພາຍຫຼັງ; ສະຖານທີ່ຊື້ຊອງການປະມູນ: ຫ້ອງການ ທະນາຄານແຫ່ງ ສປປ ລາວ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ພິຈາລະນາເຂົ້າຮ່ວມການປະມູນໃນຄັ້ງນີ້ດ້ວຍ.

**ເຊັນແທນຫົວໜ້າຫ້ອງການ**

**ຮອງຫົວໜ້າຫ້ອງການ**

ທະນາຄານແຫ່ງ ສປປ ລາວ ຫ້ອງການ

**ເພັດສະໝອນ ແສງຈັນ**